ກອງປະຊຸມ: “ເຜີຍແຜ່ລະບຽບການທີ່ກ່ຽວກັບວຽກງານຕະຫຼາດທຶນ”

ໃນວັນທີ 19/11/2019 ໄດ້ມີການຈັດ ກອງປະຊຸມ ເຜີຍແຜ່ລະບຽບການທີ່ກ່ຽວກັບວຽກງານຕະຫຼາດທຶນ ເວລາ 8:00-11:30 ໂມງ ທີ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສໍານັກງານໃຫຍ່ ຊັ້ນ 4 ໂດຍມີຜູ້ເຂົ້າຮ່ວມ ດັ່ງນີ້:

1. ສໍານັກງານຄະນະກໍາມະການຄຸ້ມຄອງຫລັກຊັບ.
   - ທ່ານ ສຽວສະຫວາດ ທິລະມຸນ ຮອງຫົວໜ້າ ສຄຄຊ
   - ທ່ານ ພູໄຮ ຫຼວງມຸນນິນທອນ ຮອງຫົວໜ້າ ພະແນກນິຕິກໍາ
   - ທ່ານ ຄໍາແພງ ແກ້ວປັນຍາ ວິຊາການ ພະແນກນິຕິກໍາ ພ້ອມດ້ວຍຄະນະ
2. ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
   - ທ່ານ ນາງ ປະພັດສອນ ສຸຄະບັນດິດ ຮອງປະທານສະພາບໍລິຫານ
   - ທ່ານ ບຸນເຕີມ ກົມມິດຕະພາບ ສະມາຊິກສະພາບໍລິຫານ ສະມາຊິກອິດສະຫລະ
   - ທ່ານ ອັດດາມາ ສຸຄະບັນດິດ ສະມາຊິກສະພາບໍລິຫານ ຜູ້ອໍານວຍການໃຫຍ່
   - ທ່ານ ນາງ ວຽງດາລາ ບຸບຜາ ສະມາຊິກສະພາບໍລິຫານ
   - ທ່ານ ຄໍາພອນ ພິລະພັນ ສະມາຊິກສະພາບໍລິຫານ
   - ທ່ານ ພັນໂນລາ ສຸຄະບັນດິດ ຮອງຜູ້ອໍານວຍການໃຫຍ່ ຜູ້ອໍານວຍການຝ່າຍການເງິນ

   ພ້ອມດ້ວຍຄະນະເລຂາ

ເຊິ່ງຈຸດປະສົງໃນການຈັດກອງປະຊຸມກໍເພື່ອເຜີຍແຜ່ລະບຽບການກ່ຽວກັບວຽກງານຕະຫລາດທຶນທີ່ມີການປັບປຸງເພື່ອແລກປ່ຽນຄໍາຄິດຄໍາເຫັນຮ່ວມກັນ ໃນ 3 ຫົວຂໍ້ທີ່ສໍາຄັນ ດັ່ງຕໍ່ໄປນີ້ :

1. ຄໍາແນະນໍາກ່ຽວກັບການຄຸ້ມຄອງບໍລິຫານ ສໍາລັບບໍລິສັດຈົດທະບຽນ ໃນຕະຫລາດຫລັກຊັບລາວ
2. ຂໍ້ຕົກລົງວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ
   ໂດຍການບັນຍາຍ ຂອງ ທ່ານ ພູໄຮ ຫຼວງມຸນນິນທອນ ຮອງຫົວໜ້າ ພະແນກນິຕິກໍາ
3. ລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ
   ໂດຍການບັນຍາຍຂອງ ທ່ານ ຄໍາແພງ ແກ້ວປັນຍາ ວິຊາການ ພະແນກນິຕິກໍາ

